ລັດແຄນຊັດສ
ກະຊວງສັງຄົມ ແລະ ການບໍລິການດ້ານພັກຟື້ນ
ພ່ວຍງານບໍລິການເດັກ ແລະ ຄອບຄົວ

# ແຈ້ງການຜົນການສືບສວນ
## ລາຍງານສຳຫລັບຄອບຄົວ



ວັນສົ່ງຈົດໝາຍ: / / ຫ້ອງການ SRS:

ເຖິງ:

ທີ່ຢູ່:
ຖະໜົນ/ຕູ້ໄປສະນີ
ເມືອງ ຣັດ
ລະຫັດ ໄປສະນີ

ຈາກ:

ເບີໂທລະສັບ #:

ທີ່ຢູ່:
ຖະໜົນ/ຕູ້ໄປສະນີ
ເມືອງ ຣັດ
ລະຫັດໄປສະນີ

ພະແນກບໍລິການສັງຄົມ ແລະ ການຟື້ນຟູແຫ່ງຣັດຄານຊາສໄດ້ສືບສວນສຳເລັດແລ້ວແລະໄດ້ຕັດສິນໃຈດັ່ງລຸ່ມນີ້:

| ຊື່ເດັກ | ຂໍ້ສົງໃສ | ຜົນການສືບສວນ | ຜູ້ຕ້ອງສົງໃສວ່າເຮັດຜິດ ຫລື ຜູ້ກະທຳຜິດ* |
|---|---|---|---|
| | | | |
| | | | |
| | | | |
| | | | |
| | | | |

*ຜູ້ກະທຳຜິດສາມີໂອກາດທີ່ຈະອຸທອນໜ່ວຍງານສືບສວນ, ເບິ່ງອີກໜ້າໜຶ່ງ

| ການບໍລິການທີ່ແນະນຳ | ☐ | ບໍ່ | ☐ | ແມ່ນ ການບໍລິການທີ່ແນະນຳຂຽນໄວ້ແລ້ວ: | |
|---|---|---|---|---|---|
| | | | | | |

ການຕັດສິນໃຈພື້ນຖານ:

ເອກະສານສົ່ງ: ຫ້ອງທີ່ໝາຍ × ແມ່ນຜູ້ທີ່ໄດ້ຮັບສຳເນົາແຈ້ງການນີ້ ເອກະສານ ຜູ້ຕ້ອງສົງໃສ. ☐ ແຟ້ມ

☐ ພໍ່ແມ່/ຜູ້ດູແລເດັກ ☐ ຜູ້ຕ້ອງສົງໃສ ☐ ເດັກ
☐ ຜູ້ສັນຍາທີ່ໃຫ້ການບໍລິການ ☐ ຫົວໜ້າພະແນກ ☐ ເດັກທີ່ຈະຖືກຍ້າຍໄປ

# ຂໍ້ມູນສຳຄັນ

## ຄວາມໝາຍຂອງ "ບໍ່ໄດ້ຮັບການພິສູດ" ແລະ "ໄດ້ຮັບການພິສູດ" ແມ່ນຫຍັງ?

ການລາຍງານ ຜູ້ຖືກກ່າວຫາຫລື ຜູ້ຕ້ອງສົງໃສໃນການທຳຮ້າຍ ຫລື ປະລະເດັກ ຖືກວ່າເປັນຜູ້ທີ່ "ບໍ່ໄດ້ຮັບການພິສູດ" ຖ້າຫາກວ່າ (1) ບໍ່ມີຫລັກຖານວ່າການທາລຸນບໍ່ໄດ້ເກີດຂື້ນ. (2) ບໍ່ມີຫລັຖານພຽງພໍ(ໂດຍໃຊ້ມາດຕະຖານຄວາມຊັດເຈນ ແລະ ຊວນໃຫ້ເຊື່ອ) ທີ່ຈະສະຫລຸບໄດ້ວ່າບຸກຄົນຜູ້ນັ້ນຈະເຮັດສິ່ງທີ່ເກີດຂື້ນ.
ການລາຍງານຜູ້ຖືກກ່າວຫາ ຫລື ສົງໃສວ່າທຳຮ້າຍ ຫລື ປະລະເດັກ ຈະຖືວ່າເປັນການ "ໄດ້ຮັບການພິສູດ" ຖ້າຫາກວ່າມີຫລັກຖານທີ່ຊັດເຈນ ແລະ ເຮັດໃຫ້ເຊື່ອພຽງພໍທີ່ຈະສຳຫລຸບວ່າ ມີການທຳຮ້າຍເກີດຂື້ນອີງຕາມກົດລະບຽບຂອງຝ່າຍບໍລິຫານຣັດຄານຊາສ ແລະ ໜ່ວຍງານພິສູດຫລັກຖານຣັດ ຄານຊາສ.
ຂໍ້ມູນກ່ຽວກັບ ການຜົນການສືບສວນວ່າ ຍັງບໍ່ທັນໄດ້ຮັບການພິສູດ ຫລື ໄດ້ຮັບການພິສູດ ແມ່ນຖືກກຳນົດໃນກົດໝາຍ ແລະ ບໍ່ສາມາດໃຫ້ປະຊາຊົນທົ່ວໄປເບິ່ງໄດ້ (K.S.A. 38-1502). ຂໍ້ມູນນີ້ແມ່ນຈະຖືກຮັກສາໂດຍ SRS ເພື່ອວັດຖຸປະສົງໃນການຊ່ວຍເຫລືອພະແນກ ຖ້າຫາກໄດ້ຮັບລາຍງານເພີ່ມເຕີມກ່ຽວກັບເດັກ ຫລື ຜູ້ໃຫຍ່ ຄົນດຽວກັນ. ຂໍ້ມູນນີ້ສາມາດໃຫ້ກັບໜ່ວຍງານອື່ນທີ່ມີໜ້າທີ່ຮັບຜິດຊອບໃນການປົກປ້ອງເດັກ ຫລື ວ່າ ໄດ້ຮັບການອານຸມັດຈາກກົດໝາຍ.

## ຜູ້ຕ້ອງສົງໃສທີ່ໄດ້ຮັບການພິສູດ

ຜູ້ຕ້ອງສົງໃສທີ່ໄດ້ຮັບການພິສູດແມ່ນບຸກຄົນທີ່ສາມາດພິສູດໄດ້ວ່າໄດ້ກະທຳການທຳຮ້າຍ ແລະປະລະເດັກ ຕາມທີ່ກຳນົດໄວ້ໂດຍໜ່ວຍງານພິສູດຫລັກຖານແຫ່ງຣັດຄານຊາສ 38-1502 ຫລື ກົດລະບຽບຂອງໜ່ວຍງານບໍລິຫານ ຣັດຄານຊານ ເຊິ່ງມີຄວາມຮ້າຍແຮງ ພຽງພໍທີ່ຈະເຮັດໃຫ້ພວກເຂົາບໍ່ຄວນໄດ້ຮັບການຈ້າງ, ຢູ່ຮ່ວມ ຫລື ອາສາສະມັກໃນວຽກງານດູແລເດັກໃນບ້ານ ຫລື ສະຖານທີ່ຕ່າງໆ. ພະແນກ SRS ໄດ້ຂຽນຄຳແນະນຳກ່ຽວກັບການກວດສອບ
ເມື່ອມີຜູ້ຕ້ອງສົງໃສໄດ້ຮັບການພິສູດ. ຜູ້ທີ່ຖືກຕາມເງື່ອນໄຂທີ່ຖືກພິສູດຕາມຄຳແນະນຳນັ້ນ ຈະຖືກບັນທຶກຊື່ໄວ້ໃນທະບຽນຜູ້ທຳຮ້າຍ ແລະ ປະລະເດັກ.
ທະບຽນຜູ້ທຳຮ້າຍ ແລະ ປະລະເດັກ ແມ່ນລາຍຊື່ ຜູ້ທີ່ໄດ້ຮັບການພິສູດຈາກທາງ SRS.

ກົດໝາຍຂອງຣັດ ຄານຊາສ ຫ້າມໃຫ້ບຸກຄົນໃດກໍ່ຕາມທີ່ໄດ້ຮັບໃບອານຸຍາດຈາກພະແນກ ສູຂະພາບ ແລະ ສິ່ງແວດລ້ອມແຫ່ງ ຣັດ ຄານຊາສ ດຳເນີນການດູແລເດັກ ຖ້າຫາກວ່າມີບຸກຄົນທີ່ຢູ່ຮ່ວມ, ທີ່ຈ້າງມາເຮັດວຽກ ຫລື ອາສາສະມັກມາເຮັດວຽກນັ້ນ ຖືກພິສູດຈາກທາງ SRS ວ່າເປັນຜູ້ທຳຮ້າຍ ຫລື ປະລະເດັກ.
ແຈ້ງການກ່ຽວກັບການພິສູດນີ້ຈະຖືກສົ່ງໄປພະແນກສຸຂະພາບແລະສິ່ງແວດລ້ອມ ແລະ ທີ່ບ້ານ ແລະ ສະຖານທີ່ຕ່າງໆ.

## ການນຳສະເໜີຂໍ້ມູນ

ຂໍ້ມູນກ່ຽວກບການລາຍງານ ຫລື ຜົນການສືບສວນການທຳຮ້າຍ ແລະ ປະລະເດັກ ແມ່ນບໍ່ສາມາດເຜີຍແຜ່ນໃຫ້ປະຊາຊົນທົ່ວໄປໄດ້. ຂໍ້ມູນນີ້ແມ່ນຈະຖືກຮັກສາໂດຍ SRS ເພື່ອວັດຖຸປະສົງໃນການຊ່ວຍເຫລືອພະແນກ ຖ້າຫາກໄດ້ຮັບລາຍງານເພີ່ມເຕີມກ່ຽວກັບເດັກ ຫລື ຜູ້ໃຫຍ່ ຄົນດຽວກັນ.
ຂໍ້ມູນນີ້ສາມາດໃຫ້ກັບໜ່ວຍງານອື່ນທີ່ມີໜ້າທີ່ຮັບຜິດຊອບໃນການປົກປ້ອງເດັກ ຫລື ວ່າ ໄດ້ຮັບການອານຸມັດຈາກກົດໝາຍ.
ຂໍ້ມູນກ່ຽວກັບຜູ້ທີ່ຮັບການພິສູດວ່າກະທຳຜິດຈະເຜີຍແຜ່ໄດ້ຕາມການກຳນົດຂອງກົດໝາຍ ຫລື ອອກເປັນລາຍລັກອັກສອນໂດຍຜູ້ທີ່ມີສ່ວນກ່ຽວຂ້ອງ.

## ສິດໃນການອຸທອນ

ເຈົ້າອາດອຸທອນການຕັດສິນໃຫ້ເຈົ້າເປັນຜູ້ທີ່ໄດ້ຮັບການພິສູດ ວ່າເປັນຜູ້ ທຳຮ້າຍ ຫລື ປະລະເດັກ ໂດຍການຂຽນຄຳຮ້ອງເປັນລາຍລັກອັກສອນ ເພື່ອການພິຈາລະນາຢ່າງຍຸຕິທຳ ຫາ K.A.R. 30-7-68 *et seq.* ພ້ອມທັງຫ້ອງການ ການພິຈາລະນາຄະດີ ພະແນກບໍລິຫານ ຣັດຄານຊານ ທີ່, 1020 S. ຄານຊາສ, ໂຕເປກາ, ຄານຊາສ 66612-1327 ພາຍໃນ 30 ວັນຈາກມື້ແຈ້ງການນີ້. ຖ້າແຈ້ງການການພິສູດນີ້ຖືກສົ່ງໂດຍທາງໄປສະນີ ແມ່ນ ອານຸຍາດໃຫ້ຊ້າໄປໄດ້ອີກສາມວັນ. ຂໍ້ມູນເພີ່ມເຕີມກ່ຽວກັບການພິຈາລະນາຢ່າງເປັນທຳ ຈາກທຸກຫ້ອງການທີ່ຂື້ນ ກັບ ຫລື ຫ້ອງການທີ່ບໍ່ຂື້ນ SRS ສາມາດເບິ່ງໄດ້ທີ່ http://da.state.ks.us/hearings/request.htm. ເຈົ້າອາດໃຫ້ສະພາກົດໝາຍ ຫລື ຜູ້ອື່ນເປັນຕົວແທນຂອງເຈົ້າໃນການພິຈາລະນາຄະດີ.
ຫາກເຈົ້າບໍ່ພໍໃຈໃນການຕັດສິນການພິຈາລະນາ, ເຈົ້າອາດຂໍໃຫ້ທົບທວນການຕັດສິນກັບຄະນະກຳມະການການອຸທອນຂອງຣັດ.
ການຕັດສິນຂອງຄະນະກຳມະການການອຸທອນ ແຫ່ງຣັດ ອາດຈະເຮັດໃນສານຂັ້ນເມືອງ.

## ການຖອນຊື່ອອກຈາກທະບຽນກາງ

ຖ້າເຈົ້າໄດ້ຮັບການພິສູດວ່າ ທຳຮ້າຍ ຫລື ປະລະເດັກໃນທະບຽນ ກາງ ເຈົ້າອາດ ຍື່ນຂໍໃຫ້ ເລຂາທິການແຫ່ງ SRSເພື່ອຖອນຊື່ເຈົ້າອອກ ຫລັງຈາກສາມປີຜ່ານໄປຕັ້ງແຕ່ມື້ຜົນການສືບສວນວ່າໄດ້ຮັບການພິສູດອອກມາ ຫລື ເມື່ອ ມີການປ່ຽນແປງ ສະພາບການຂອງເຈົ້າ ຫລື ເມື່ອເຈົ້າມີຂໍ້ມູນໃໝ່ເພື່ອໃຫ້ມີການພິຈາລະນາ. ການຍື່ນຂໍຂອງເຈົ້າຕ້ອງເຮັດໂດຍການຂຽນ ແລະ ຂຽນຈົດໝາຍໄປຫາໂດຍກົງ ຫາເລຂາທິການຂອງພະແນກ ບໍບິການສັງຄົມ ແລະ ການຟື້ນຟູ ເລື່ອງ: ໜ່ວຍງານບໍລິການເດັກ ແລະ ຄອບຄອບ, 915 SW ຮາຣ໌ຣີສັນ, D.S.O.B., ຊັ້ນ 5 ໃຕ້, ໂຕເປກາ, KS 66612.

## ສິທິພົນລະເມືອງ

ບໍ່ມີໃຜ ບໍ່ວ່າ ຈະເປັນ ເຊື້ອຊາດໃດ, ຊາດກຳເນີດໃດ, ອາຍູເທົ່າໃດ, ພິການ ຫລືບໍ່ ນັບຖື ສາດສະໜາໃດ ຫລື ເພດໃດ ທີ່ຈະຖືກ ແບ່ງແຍກຈາກການມີສ່ວນຮ່ວມ, ຖືກ ປະຕິເສດຜົນປະໂຫຍດ, ຫລື ຖືກຈຳແນກ ພາຍໃນແຜນການ ຫລື ກິດຈະກຳຂອງພະແນກ ບໍລິການສັງຄົມແລະ ການຟື້ນຟູ.
ຖ້າຫ້າເຈົ້າຮູ້ສຶກວ່າເຈົ້າຖືກຈຳແນກຍ້ອນການສິ່ງໃດສິ່ງໜຶ່ງທີ່ກ່າວມານັ້ນ ເຈົ້າອາດຈະຮ້ອງຮຽນເປັນລາຍລັກອັກສອນ ທີ່ ພາກສ່ວນ ສິທິພົນລະເມືອງ/EEO ພະແນກບໍລິການສັງຄົມ ແລະ ການຟື້ນຟູ, D.S.O.B., ຊັ້ນ 6, 915 SW ຮາຣ໌ຣີສັນ, ໂຕເປກາ, KS 66612.